ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງເຊກອງ

ເຈົ້າແຂວງ

ເລກທີ ...87...../ຈຂ.ຊກ

ເຊກອງ, ວັນທີ...10...3...2015........

## ຂໍ້ຕົກລົງ

## ວ່າດ້ວຍການຍົກຍ້າຍເມືອງກະລຶມເກົ່າໄປຢູ່ເມືອງກະລຶມໃໝ່

- **ອີງຕາມ:** ກົດໝາຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ, ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003 ໝວດ III, ມາດຕາ 14 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- **ອີງໃສ່:** ການເຫັນດີເອກະພາບກອງປະຊຸມຂອງຄະນະກຳມະການລະດັບຊາດ ໃນຄັ້ງວັນທີ 6/3/2015 ໃຫ້ຍົກຍ້າຍເມືອງກະລຶມເກົ່າ ໄປຢູ່ເມືອງກະລຶມໃໝ່.
- **ອີງໃສ່:** ການຄົ້ນຄວ້າເຫັນດີເອກະພາບຂອງກອງປະຊຸມຄະນະປະຈຳພັກແຂວງ ເລກທີ 25/ຄຈພຂ, ລົງວັນທີ 04/02/2015 ວ່າດ້ວຍການຍົກຍ້າຍ ແລະ ຈັດສັນເມືອງກະລຶມໃໝ່ ເພື່ອປະຕິບັດແຜນການໃຫ້ສຳເລັດ ແລະ ທັນເວລາລະດູການຂອງການຈັດພິທີເປີດການນຳໃຊ້ ເມືອງກະລຶມໃໝ່ຢ່າງເປັນທາງການ.

## ເຈົ້າແຂວງຕົກລົງ

**ມາດຕາ 01:** ເຫັນດີໃຫ້ຍົກຍ້າຍເມືອງກະລຶມເກົ່າ ໄປຢູ່ເມືອງກະລຶມໃໝ່ ນັບແຕ່ວັນທີ 14/3/2015 ເປັນຕົ້ນໄປ.

**ມາດຕາ 02:** ມອບໃຫ້ຄະນະກຳມະການ, ກອງເລຂາຄຸ້ມຄອງໂຄງການກໍ່ສ້າງຍົກຍ້າຍ ແລະ ຈັດສັນເມືອງກະລຶມໃໝ່ຂັ້ນແຂວງ ຂັ້ນເມືອງ ປະສານສົມທົບກັບອຳນາດການປົກຄອງເມືອງ ນາພາປະຊາຊົນ ພ້ອມກັບຈັດຕັ້ງປະຕິບັດໃຫ້ສຳເລັດໂດຍໄວ.

**ມາດຕາ 03:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ-ແຂວງເຊກອງ**

ຄຳເພີຍ ບຸດດາວົງ